**ຂ່າວ**

**ກອງປະຊຸມຄົ້ນຄວ້າ ແລະ ກຳນົດມາດຖານຫຼັກສູດ ແລະ ເນື້ອໃນບົດຮຽນສຳລັບນັກຮຽນພິການຫູ-ປາກ**

**ໃນຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາຕອນຕົ້ນ**

ຕອນເຊົ້າຂອງ ວັນທີ 17 ມີນາ 2014 ສູນການສຶກສາຮຽນຮ່ວມ ກົມອະນຸ ບານ ແລະ ປະຖົມສຶກສາ ກະຊວງສຶກສາທິການ ແລະ ກິລາ ໄດ້ຈັດກອງປະຊຸມ ຄົ້ນຄວ້າ ແລະ ກຳນົດມາດຖານຫຼັກສູດ ແລະ ເນື້ອໃນບົດຮຽນສຳລັບນັກຮຽນພິການຫູ-ປາກ ໃນຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາຕົ້ນຂຶ້ນທີ່ຫ້ອງປະຊຸມເຮືອນພັກແຄມງື່ມ, ທ່າລາດ ແຂວງວຽງຈັນ. ໃຫ້ກຽດເປັນປະທານກອງປະຊຸມ ໂດຍແມ່ນທ່ານ ລີຕູ້ ບົວປາວ ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ແລະ ກິລາ.





ເຂົ້າຮ່ວມປະຊຸມຄັ້ງນີ້ຍັງມີທ່ານຫົວໜ້າກົມ, ຮອງຫົວໜ້າກົມອະນຸບານ ແລະ ປະຖົມສຶກສາ/ຜູ້ອຳນວຍການສູນການສຶກສາຮຽນຮ່ວມ, ຄະນະອຳນວຍການ ແລະ ນັກວິຊາການຈາກສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ຮອງຜູ້ອຳນວຍການສູນ, ຫົວໜ້າ ແລະ ຮອງຫົວໜ້າພະແນກ, ຫົວໜ້າ ແລະ ຮອງຂະແໜງ, ພະນັກງານວິຊາການຂອງສູນການສຶກສາຮຽນຮ່ວມ, ຄູສອນໂຮງຮຽນສຶກສາພິເສດ ແຂວງຫຼວງພະບາງ, ຄູສອນໂຮງຮຽນສຶກສາພິເສດ ສູນການແພດຟື້ນຟູໜ້າທີ່ການ ກະຊວງສາທາລະນະສຸກ ແລະ ສະມາຄົມຄົນຫູໜວກ ລວມທັງໝົດ 38 ທ່ານ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອ ຄົ້ນຄວ້າ ແລະ ກຳນົດມາດຖານຫຼັກສູດ ແລະ ເນື້ອໃນບົດຮຽນສຳລັບນັກຮຽນພິການຫູ-ປາກ ສຳລັບຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາຕອນຕົ້ນ ໂດຍດັດປັບເອົາຈາກຫຼັກສູດແຫ່ງຊາດ. ຜ່ານມາ ສ.ປ.ປ ລາວ ຍັງບໍ່ທັນມີ ຫຼັກສູດສະເພາະຄົນພິການຫູ-ປາກ ຈຶ່ງໄດ້ນຳໃຊ້ຫຼັກສູດແຫ່ງຊາດສອນໄລຍະໜຶ່ງ ຈຶ່ງເຮັດໃຫ້ໂຮງຮຽນສຶກສາພິເສດ ແລະ ຄູສອນພົບບັນຫາໃນ ການຈັດການຮຽນ-ການສອນສຳລັບຜູ້ຮຽນທີ່ເປັນຄົນພິການຫູ-ປາກ. ກອງປະຊຸມຄັ້ງນີ້ຈຶ່ງເປັນຄັ້ງທຳອິດໃນການກຳນົດມາດຖານຫຼັກສູດ ແລະ ເນື້ອໃນບົດຮຽນສຳລັບນັກຮຽນພິການຫູ-ປາກ ໃນຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາຕົ້ນ. ທັງນີ້ກໍເພື່ອປະຕິບັດຕາມແນວທາງ ນະໂຍບາຍຂອງພັກ ແລະ ລັດຖະບານລາວ ກໍຄືແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ, ກົດໝາຍການສຶກສາກ່ຽວກັບ ການຂະຫຍາຍໂອກາດໃຫ້ຄົນພິການໄດ້ເຂົ້າເຖິງການສຶກສາເທົ່າທຽມກັບນັກຮຽນປົກະຕິ



